ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ
ຖະໜົນ ເລກ 7, ບ້ານ ໂພນສະຫວັນກາງ, ເມືອງ ແປກ, ແຂວງ ຊຽງຂວາງ ໂທ: +856-61 260030-31 ແຟັກ: +856-61 260034

# ໜ່ວຍຊາວໜຸ່ມ ທຫລ.ຊຂ ເຂົ້າຮ່ວມຂະບວນການອອກແຮງງານອະນາໄມ



ໃນຕອນເຊົ້າຂອງ ວັນທີ 23 ສິງຫາ 2021 ໜ່ວຍຊາວໜຸ່ມສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ ໄດ້ເຂົ້າຮ່ວມຂະບວນການອອກແຮງງານອະນາໄມລວມ ຢູ່ສະຖານທີ່ສວນສາທາລະນະໜອງນໍ້າຫງໍາ ເປັນກຽດນໍາພາຂະບວນການໂດຍ ສະຫາຍ ເພັດສະໝອນ ດາວົງສອນ ເລຂາຄະນະບໍລິຫານງານຊາວໜຸ່ມແຂວງຊຽງຂວາງ, ມີບັນດາຊາວໜຸ່ມພະແນກການ-ກົມກອງອ້ອມຂ້າງແຂວງ, ຊາວໜຸ່ມແຮກສ່ຽວ ເຂົ້າຮ່ວມຢ່າງເປັນຂະບວນການຟົດຟື້ນ ຫຼາຍກວ່າ 400 ສະຫາຍ.

ຈຸດປະສົງໃນການອອກແຮງງານໃນຄັ້ງນີ້ ເພື່ອສະແດງຄວາມກະຕັນຍູຮູ້ບຸນຄຸນຕໍ່ອາດີດທ່ານຜູ້ນໍາທີ່ແສນເຄົາລົບຮັກ ແລະ ເນື່ອງໃນໂອກາດສະເຫຼີມສະຫຼອງວັນສ້າງຕັ້ງລັດຖະທໍາມະນູນແຫ່ງຊາດ ຄົບຮອບ 30 ປີ (15 ສິງຫາ 1991 – 15 ສິງຫາ 2021) ແລະ ວັນຍຶດອໍານາດ ຄົບຮອບ 46 ປີ (23 ສິງຫາ 1975 – 23 ສິງຫາ 2021), ພ້ອມທັງເປັນການຕ້ອນຮັບພິທີປະກາດ 4 ບຸກ ຂອງຄະນະບໍລິຫານງານຊາວໜຸ່ມປະຊາຊົນ ປະຕິວັດລາວ ເມືອງແປກ ແຂວງຊຽງຂວາງ ທີ່ຈະໄດ້ປະກາດຂຶ້ນໃນມໍ່ໆນີ້.

ການສ້າງຂະບວນການອອກແຮງງານໃນຄັ້ງນີ້ໄດ້ມີການເກັບຂີ້ເຫຍື້ອ, ຖາງປ່າ, ຕັດຫຍ້າໃນເຂດທີ່ຮົກເຮື້ອ ເພື່ອເຮັດໃຫ້ສະຖານທີ່ ສາທາລະນະໜອງນໍ້າຫງໍາແຫ່ງນີ້ມີຄວາມສະອາດ ແລະ ຈົບງາມ.









✍ ຂ່າວ: ສຸກສະຫວັນ ພິມມະວົງ